ໜ່ວຍຊາວໜຸ່ມ ພວຕ ສໍາເລັດກອງປະຊຸມໃຫຍ່ຄັ້ງທີ 2
Written by Administrator
Thursday, 22 November 2018 01:48 - Last Updated Thursday, 22 November 2018 02:58

ວັນທີ 21 ພະຈິກ 2018 ທີ່ຜ່ານມານີ້ ໜ່ວຍຊາວໜຸ່ມ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ
ແຂວງບໍ່ແກ້ວ ໄດ້ຈັດກອງປະຊຸມໃຫຍ່ຄັ້ງທີ່ 2 ຂອງຕົນຂຶ້ນຢ່າງເປັນທາງການ
ຢູ່ທີ່ຫ້ອງປະຊຸມພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ພາຍໃຕ້ການເປັນປະທານກ່າວເປີດ
ແລະ ກ່າວປິດ ຂອງ ສະຫາຍ ວິໄລເອກ ໄຊສະຫງວນ ເລຂາໜ່ວຍ ຊາວໜຸ່ມ ພວຕ, ເປັນປະທານຮ່ວມໂດຍ
ສະຫາຍ ສົມສັກ ມະຫາຜົນ ຮອງເລຂາ ຄະນະບໍລິຫານງານ ຊາວໜຸ່ມ ປປ ລາວແຂວງ, ສະຫາຍ
ໄພວັນສ້ອຍທອງ ຮອງເລຂາ ໜ່ວຍພັກ ຮອງຫົວໜ້າພະແນກ ວິທະຍາສາດ ແລະ ເຕັກໂນໂລຊີແຂວງ.
ມີຕາງໜ້າ ອົງການຈັດຕັ້ງພາຍໃນ, ແຂກຖືກເຊີນຈາກໜ່ວຍຊາວໜຸ່ມ ອ້ອມຂ້າງ ແລະ
ຜູ້ແທນສົມບູນຊາວໜຸ່ມ ເຂົ້າທັງໝົດ 30 ສະຫາຍ, ຍິງ 8 ສະຫາຍ.
 ກອງປະຊຸມໄດ້ດໍາເນີນໄປຕາມວາລະ ຂັ້ນຕອນ ແລະ ໄດ້ຮັບຟັງບັັນດາຂໍ້ຕົກລົງ
ວ່າດ້ວຍການອະນຸມັດ ເປີດກອງປະຊຸມໃຫຍ່, ຂໍ້ຕົກລົງຂອງຄະນະໜ່ວຍພັກ ວ່າດ້ວຍ
ການແຕ່ງຕັ້ງກອງເລຂາ, ຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາໂຄງປະກອບຂອງບຸກຄະລາກອນ ແລະ
ນິຕິກໍາອື່ນໆ ຈາກນັ້ນ ສະຫາຍ ວິໄລເອກ ໄຊສະຫງວນ ເລຂາ ໜ່ວຍຊາວໜຸ່ມ
ໄດ້ຜ່ານບົດລາຍງານການເມືອງທັງ 2 ພາກ, ເຊິ່ງສະແດງໃຫ້ເຫັນການເຄື່ອນໄຫວ ຊີ້ນໍາ ນໍາພາ
ຂອງຄະນະໜ່ວຍຊາວໜຸ່ມ ທີ່ສາມາດຍາດແຍ່ງມາໄດ້ໄລຍະຜ່ານມາ ແລະ ທິດທາງແຜນການ ແຕ່ປີ 2019
ຮອດປີ 2023.
ຈາກນັ້ນກອງປະຊຸມໄດ້ດໍາເນີນ ການເລືອກຕັ້ງ ເອົາຄະນະໜ່ວຍຊາວໜຸ່ມ ຊຸດໃຫຍ່
ອີງໃສ່ມາດຖານເງື່ອນໄຂ ຕາມລະບຽບຊາວໜຸ່ມປປ ລາວວາງອອກຢ່າງເຂັ້ມງວດ ດ້ວຍມີຜູ້ສະມັກ
ເລື່ອກຕັ້ງ ຈໍານວນ 5 ສະຫາຍ, ຍິງ 1 ສະຫາຍ; ໃນນີ້ ແມ່ນໃຫ້ເລືອກເອົາ 3 ສະຫາຍ.
ຜົນຂອງການເລືອກຕັ້ງ ແລະ ຕາມປະຊາມະຕິແມ່ນໄດ້ 3 ສະຫາຍ, ຍິງ 1 ສະຫາຍ ຄື: ສະຫາຍ ສົມບູນ
ພັນທະນິດ ເປັນເລຂາໜ່ວຍຊາວໜຸ່ມ, ສະຫາຍ ນ. ຈັນທີ ສິດທິພອນ ເປັນຮອງເລຂາ, ສະຫາຍ ສົມພຸດ
ທອງສະມຸດ ເປັນຄະນະໜ່ວຍຊາວໜຸ່ມ ແລະ ຍັງໄດ້ເລືອກເອົາ ສະຫາຍ ເກດແສງ ວັນນະຈອມຈັນ
ມາເປັນຜູ້ຊ່ວຍວຽກງານກວດກາ ພາຍໃນໜ່ວຍຊາວໜຸ່ມຕື່ມອີກ.
ຕອນທ້າຍກອງປະຊຸມ ຍັງໄດ້ຮັບຟັງຄໍາເຫັນໂອ້ລົມຂອງ ສະຫາຍ ສົມສັກ ມະຫາຜົນ ຮອງເລຂາ
ຄະນະບໍລິຫານງານ ຊາວໜຸ່ມ ປປລາວ ແຂວງ, ເຊິ່ງສະຫາຍໄດ້
ຕີລາຄາສູງຕໍ່ກັບການຈັດກອງປະຊຸມໃຫຍ່ ຂອງໜ່ວຍຊາວໜຸ່ມ ພວຕ ຄັ້ງນີ້ ແລະ
ມັນເປັນບາດກ້າວທີ່ ມີຜົນສໍາເລັດ, ເຊິ່ງສະແດງອອກ ໜ່ວຍຊາວໜຸ່ມຂອງພວກເຮົາ
 1 / 2

ໜ່ວຍຊາວໜຸ່ມ ພວຕ ສໍາເລັດກອງປະຊຸມໃຫຍ່ຄັ້ງທີ 2
Written by Administrator
Thursday, 22 November 2018 01:48 - Last Updated Thursday, 22 November 2018 02:58
ສາມາດຍາດແຍ່ງໄດ້ເປັນໜ່ວຍຊາວໜຸ່ມ ຕົວແບບ 4 ບຸກເປັນສະໄໝທີ່ 2 ແລະ
ສະມາຊິກຊາວໜຸ່ມທຸກສະຫາຍ ແມ່ນໄດ້ຮັບການຍ້ອງຍໍ້ປະຈໍາທຸກໆປີ ແລະ
ຈະຕໍ່ເຄື່ອນໄຫວຈັດຕັ້ງປະຕິບັດໃນຕໍ່ໜ້າ, ສະຫາຍຍັງໄດ້ຍ້ອງຍໍຊົມເຊີຍ ແລະ
ມີຄໍາເຫັນຫຼາຍປະເດັນທີ່ສະແດງເຖິງການເຕີມໃຫຍ່ຂະຫຍາຍຕົວ
ຂອງກ້ອນກໍາລັງຊາວໜຸ່ມເວົ້າລວມ, ເວົ້າສະເພາະ ແມ່ນ ກ້ອນກໍາລັງຊາວໜຸ່ມ
ພາຍໃນແຂວງບໍ່ແກ້ວ, ແຕ່ເຖີງຢ່າງໃດກໍ່ຕາມ ໜ່ວຍຊາວໜຸ່ມ ພວຕ ຂອງພວກເຮົາ
ກໍ່ເປັນສ່ວນໜື່ງຂອງກ້ອນກໍາລັງທັງໝົດ
ທີ່ມີບົດບາດໃນການເປັນເສນາທິການໃຫ້ແກ່ພະແນກການຂອງຕົນ ໃນການເຄື່ອນໄຫວວຽກງານ
ວິຊາສະເພາະ ທີ່ໄດ້ສະແດງອອກຢູ່ໃນບົດລາຍງານການເມືອງນັ້ນ.
ສະຫາຍຍັງໄດ້ໂອ້ລົມມາຍັງ ຄະນະໜ່ວຍຊາວໜຸ່ມຊຸດໃໝ່ ໃຫ້ເໜັ້ນໜັກການຕິດຕາມ ຊີ້ນໍາ
ນໍາພາ ສະມາຊິກຊາວໜຸ່ມ ພາຍໃນໜ່ວຍຂອງຕົນໃຫ້ໄດ້ເຄື່ອນໄຫວຕາມພາລະບົດບາດ,
ເຂົ້າຮ່ວມຂະບວນການ ຂອງແຂວງ ແລະ ຄະນະບໍລິຫານງານຊາວໜຸ່ມຈັດຂຶ້ນເປັນປົກກະຕິ.

ຂ່າວ ແລະ ພາບໂດຍ: ປະກາສິດ ທຳມະວົງ
 2 / 2